ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR

ຂ່າວ
NEWS

ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ສະຫະພັນກຳມະບານຮາກຖານ ທຫລ ຈັດກອງປະຊຸມ ເຜີຍແຜ່ວຽກງານວິຊາສະເພາະ 2 ຫົວຂໍ້



ສະຫະພັນກຳມະບານຮາກຖານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມເຜີຍແຜ່ວຽກງານວິຊາສະເພາະຂຶ້ນ ໃນວັນທີ 03 ພຶດສະພາ 2019 ທີ່ຫ້ອງປະຊຸມ ທຫລ. ໂດຍການກ່າວເປີດພິທີຂອງສະຫາຍ ພອນສະຫວັນ ຄຳພາວົງ, ຄະນະບໍລິຫານງານ ສະຫະພັນກຳມະບານຮາກຖານ ທຫລ ແລະ ນອກນີ້ ກໍມີຜູ້ບັນຍາຍຈາກໜ່ວຍກຳມະບານກົມເຕັກໂນໂລຊີຂໍ້ມູນຂ່າວສານ ທຫລ ແລະ ມີຜູ້ເຂົ້າຮ່ວມທີ່ເປັນສະມາຊິກສະຫະພັນກຳມະບານ ຈາກບັນດາກົມ ແລະ ທຽບເທົ່າກົມ ທຫລ ເຂົ້າຮ່ວມ 50 ສະຫາຍ.

ກອງປະຊຸມໄດ້ເຜີຍແຜ່ເນື້ອໃນທີ່ຕິດພັນກັບ 2 ຫົວຂໍ້ຂອງວຽກງານວິຊາສະເພາະຂອງກົມເຕັກໂນໂລຊີຂໍ້ມູນຂ່າວສານ ຄື: ວຽກງານຄຸ້ມຄອງເວັບໄຊ ທຫລ ແລະ ລະບົບໂອນເງິນໃຫ້ໄດ້ມາດຕະຖານ ISO 20022. ໂດຍສະຫາຍຄະນະບໍລິຫານງານສະຫະພັນກຳມະບານຮາກຖານ ທຫລ ໄດ້ກ່າວເຖິງຄວາມສຳຄັນຂອງ 2 ວຽກງານດັ່ງກ່າວວ່າ: “ໃນປັດຈຸບັນ, ລະບົບເຕັກໂນໂລຊີຂໍ້ມູນຂ່າວສານ ໄດ້ຕິດພັນກັບວຽກງານຂົງເຂດການເງິນ-ການທະນາຄານຢ່າງແຜ່ຫຼາຍ ແລະ ເປັນການປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ກໍຄືການພັດທະນາວຽກງານໃນຂະແໜງການເງິນ-ການທະນາຄານ ຈຶ່ງມີຄວາມຈຳເປັນຕ້ອງໝູນໃຊ້ເຕັກໂນໂລຊີທີ່ທັນສະໄໝເພື່ອອຳນວຍຄວາມສະດວກໃຫ້ແກ່ວຽກງານທາງການເງິນ-ການທະນາຄານ ໂດຍສະເພາະວຽກງານຄຸ້ມຄອງເວັບໄຊ ທຫລ ແລະ ລະບົບໂອນເງິນໃຫ້ໄດ້ມາດຕະຖານ ISO 20022 ໃຫ້ມີຄວາມສະດວກ ຄ່ອງຕົວ ແລະ ປອດໄພ. ຄຽງຄູ່ກັບການຂະຫຍາຍຕົວທາງດ້ານເສດຖະກິດ,

ລະບົບການໂອນເງິນ ກໍ່ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ເພື່ອສ້າງຄວາມເຊື່ອໝັ້ນໃນຄວາມໝັ້ນຄົງປອດໄພຂອງການເຮັດທຸລະກຳທາງການເງິນ ແລະ ສາມາດເຊື່ອມໂຍງກັບສາກົນ”.

ໃນໂອກາດນີ້, ທ່ານປະທານໄດ້ຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມກອງປະຊຸມ ຈົ່ງໄດ້ເອົາໃຈໃສ່ໃນການສຶກສາຫຼັກການ ແລະ ລະບຽບການກ່ຽວກັບວຽກງານການຄຸ້ມຄອງ ແລະ ນຳໃຊ້ເວັບໄຊ ທຫລ ໂດຍສະເພາະໄດ້ແບ່ງໜ້າທີ່ຮັບຜິດຊອບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດການເຜີຍແຜ່ຂໍ້ມູນຂ່າວສານຜ່ານທາງເວັບໄຊ ທຫລ ໃຫ້ມີຄວາມຖືກຕ້ອງ, ວ່ອງໄວ, ຮັບປະກັນຄວາມປອດໄພ. ກໍ່ຄື ການສ້າງຂະບວນການດ້ານວິຊາສະເພາະຂອງກຳມະບານທະນາຄານ ທຫລ ໃນຄັ້ງນີ້ ກໍເປັນອີກຊ່ອງທາງໜຶ່ງ ໃນການສຶກສາ ວິທີການໃນການຄຸ້ມຄອງ ແລະ ນຳໃຊ້ເວັບໄຊ ທຫລ ແລະ ຍົກລະດັບລະບົບໂອນເງິນໃຫ້ໄດ້ມາດຕະຖານ ISO 20022 ເພື່ອຮັບປະກັນການໂອນເງິນພາຍໃນປະເທດໃຫ້ປອດໄພ, ໂປ່ງໃສ ແລະ ວ່ອງໄວ.




# ຂ່າວ-ພາບ: ວັນປະເສີດ ສີມບຸນຂັນ.

ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ